ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນ ແຂວງໄຊຍະບູລີ ເລກທີ 50/ສພຂ.ຊຍ

ໄຊຍະບູລີ, ວັນທີ 23ກໍລະກົດ 2025

# ມະຕິ

## ກອງປະຊຸມ ສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາ ບົດລາຍງານຜົນການສະຫຼຸບຕີລາຄາ

## ການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທົ່ວແຂວງ

- ອີງຕາມ ມາດຕາ 9 ຂອງກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 105/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ບົດລາຍງານ ຂອງພະແນກຍຸຕິທຳແຂວງ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຄັ້ງວັນ ທີ 22 ກໍລະກົດ 2025 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຕໍ່ເນື້ອໃນບົດລາຍງານ ຂອງພະແນກຍຸຕິທຳແຂວງ ກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II ວັນທີ 22 ກໍລະກົດ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນໄລຍະ 5 ປີ (2021-2025)**

ກອງປະຊຸມສະພາປະຊາຊົນແຂວງ ຊົມເຊີຍອົງການປົກຄອງແຂວງ ທີ່ໄດ້ຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ດຳລັດຂອງ ລັດຖະບານ ສະບັບເລກ ທີ 562/ລບ, ລົງວັນທີ 06 ພະຈິກ 2025 ແລະ ຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ສະບັບເລກທີ 836/ຈຂ.ຊຍ, ລົງວັນທີ 13 ພຶດສະພາ 2025 ແລະ ເຫັນດີຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຕໍ່ກອງປະຊຸມຄັ້ງນີ້.

ກອງປະຊຸມ ຕີລາຄາສູງຕໍ່ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ ນຳພາ-ຊີ້ນຳ ພະແນກຍຸຕິທຳແຂວງໃນການຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ດ້ວຍຫຼາຍຮູບແບບ, ຫຼາຍຮູບການ ເຊັ່ນ: ໄດ້ລົງໂຄສະນາເຜີຍແຜ່ກົດໝາຍຢູ່ບ້ານ; ໂຮງຮຽນ; ຄ້າຍຄຸມຂັງ-ດັດສ້າງ; ການແຈກຢາຍວາລະສານ, ໂຄສະນາທາງວິທະຍຸ, ໂທລະໂຄ່ງ ແລະ ເປີດຫຼັກສູດການຮຽນ-ການສອນກົດໝາຍ

45 ວັນ ແລະ ອື່ນໆ. ຊຶ່ງໄດ້ສ້າງເງື່ອນໄຂໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ-ນັກສຶກສາ ແລະ ປະຊາຊົນບັນດາເຜົ່າ ສາມາດເຂົ້າເຖິງກົດໝາຍຫຼາຍຂຶ້ນ.

ຄຽງຄູ່ກັບຜົນງານທີ່ກ່າວມານັ້ນ ກໍ່ຍັງເຫັນວ່າ ການໂຄສະນາເຜີຍແຜ່ກົດໝາຍ ຍັງບໍ່ທັນແຂງແຮງ, ເລິກເຊິ່ງ ແລະ ທົ່ວເຖິງ, ຍັງມີກົດໝາຍ, ນິຕິກຳໃຕ້ກົດໝາຍບາງສະບັບ ບໍ່ໄດ້ຮັບການເຜີຍແຜ່. ບາງຂະແໜງການ, ອົງການ, ກົມກອງ ຍັງຖືເບົາບໍ່ທັນເອົາໃຈໃສ່ສ້າງ ແຜນການ, ແຜນງານ ແລະ ໂຄງການ ອັນລະອຽດ ໃນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ກົນໄກການປະສານງານ ລະຫວ່າງ ອົງການປົກຄອງແຂວງ, ພະແນກຍຸຕິທຳແຂວງ ກັບ ຂະແໜງການ, ອົງການ, ກົມກອງກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຕໍ່ວຽກງານດັ່ງກ່າວ ຍັງບໍ່ທັນກົມກຽວກັນ ເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ ແລະ ຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນສູງເທົ່າທີ່ຄວນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການ 5 ປີ (2026-2030)**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີຮັບຮອງເອົາທິດທາງແຜນການໃນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ອົງການປົກຄອງແຂວງໄດ້ສະເໜີຕໍ່ກອງປະຊຸມຄັ້ງນີ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ ດັ່ງນີ້:

ພະແນກຍຸຕິທຳແຂວງ ເປັນເຈົ້າການ ປະສານສົມທົບກັບ ບັນດາພະແນກການ, ອົງການ, ກົມກອງ ແລະ ລັດວິສາຫະກິດ ອ້ອມຂ້າງແຂວງ ສ້າງແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 10 ສະບັບຂຶ້ນໄປ ເພື່ອສະເໜີອົງການປົກຄອງແຂວງ ນຳສະເໜີສະພາປະຊາຊົນແຂວງພິຈາລະນາຮັບຮອງ, ພ້ອມທັງຜັນຂະຫຍາຍ ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ ສະບັບເລກທີ 562/ລບ, ລົງວັນທີ 6 ພະຈິກ 2020 ແລະ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະໂຄສະນາເຜີຍແຜ່ນິຕິກຳ ແລະ ປະເມີນນິຕິກຳໃຕ້ກົດໝາຍ ສະບັບເລກທີ 836/ຈຂ.ຊຍ, ລົງວັນທີ 13 ພຶດສະພາ 2025 ແລະ ສຸມໃສ່ສືບຕໍ່ລົງໂຄສະນາເຜີຍແຜ່ກົດໝາຍ ຢູ່ບັນດາບ້ານ, ໂຮງຮຽນ, ຄ້າຍຄຸມຂັງ-ດັດສ້າງໃຫ້ຫຼາຍຂຶ້ນກ່ວາເກົ່າ; ທັງເປັນເຈົ້າການ ປະສານສົມທົບ ກັບບັນດາພະແນກການ, ອົງການ, ກົມກອງ ອ້ອມຂ້າງແຂວງ ລົງໂຄສະນາເຜີຍແຜ່ ນິຕິກຳໃຕ້ກົດໝາຍ ໃຫ້ກັບບັນດາກຸ່ມເປົ້າໝາຍຕ່າງໆ ໃຫ້ໄດ້ຫຼາຍ, ທົ່ວເຖິງ ແລະ ມີປະສິດທິພາບດີກວ່າເກົ່າ. ໃນນີ້ ກອງປະຊຸມຍັງໄດ້ເນັ້ນໜັກ ຕື່ມບາງທິດທາງ:

1) ໃຫ້ອົງການປົກຄອງແຂວງ ເພີ່ມທະວີການຊີ້ນຳ ບັນດາພະແນກການ, ອົງການ, ກົມກອງ ກ່ຽວກັບວຽກງານໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ກວ້າງຂວາງ, ເລິກເຊິ່ງ ແລະ ທົ່ວເຖິງທຸກເປົ້າໝາຍ ຫຼາຍຂຶ້ນ;

2) ໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ດຳເນີນການປະເມີນຜົນວຽກງານໂຄສະນາເຜີຍແຜ່ກົດໝາຍ ປະຈຳປີ, ຫ້າປີ ແນໃສ່ສະຫຼຸບຖອດຖອນບົດຮຽນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ປັບປຸງກົນໄກ, ຮູບການ ແລະ ວິທີການໂຄສະນາເຜີຍແຜ່ໃຫ້ສອດຄ່ອງ, ແທດເໝາະກັບລະດັບ ຂອງເປົ້າໝາຍ ແລະ ສາມາດສ້າງຄວາມຊອນເຊື່ອ, ດຶງດູດຈິດໃຈຂອງເປົ້າໝາຍ;

3) ຍົກສູງບົດບາດເປັນເຈົ້າການ ແລະ ເປັນໃຈກາງຂອງພະແນກຍຸຕິທຳ ໃນວຽກງານໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ປັບປຸງກົນໄກປະສານງານ ລະຫວ່າງ ພະແນກຍຸຕິທຳແຂວງ ກັບບັນດາພະແນກການ, ອົງການ, ກົມກອງ ແລະ ລັດວິສາຫະກິດ ອ້ອມຂ້າງແຂວງ ໃຫ້ມີຄວາມໂລ່ງລ່ຽນກົມກຽວກັນ ແນໃສ່ເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນ;

4) ໃຫ້ພະແນກຍຸຕິທຳແຂວງ, ພະແນກການ, ອົງການ, ກົມກອງ ສ້າງຖານຂໍ້ມູນ-ຂ່າວສານ ທີ່ທັນສະໄໝ ກ່ຽວກັບວຽກງານໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍ ເພື່ອໃຫ້ປະຊາຊົນ ສາມາດເຂົ້າເຖິງບັນດານິຕິກຳໄດ້ສະດວກ ແລະ ວ່ອງໄວ;

5) ໃຫ້ອົງການປົກຄອງແຂວງ ພິຈາລະນາແກ້ໄຂງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ໃຫ້ແກ່ວຽກງານໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1 ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການ, ກົມກອງ ເພີ່ມທະວີຄວາມຮັບຜິດຊອບຂອງຕົນ ໃນການປະຕິບັດມະຕິສະບັບນີ້ ໃຫ້ເຂັ້ມງວດ ແລະ ເປັນຮູບປະທຳ;

2 ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳບັນດາ ຄະນະກຳມະການ ສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ